ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
Lao Culture Tourism Public Group Company

ເລກທີ 258/ບທວລ
ນະຄອນຫລວງວຽງຈັນ, ວັນທີ 24 DEC 2025

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
: ທ່ານ ຜູ້ອຳນວຍການໃຫ່ຍຕະຫລາດຫຼັກຊັບລາວ
: ທ່ານ ຜູ້ຖືຮຸ້ນຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ເລື່ອງ : ແຈ້ງມະຕິຂອງກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2025 ວັນທີ 23/12/2025.

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 04/ສສຄ ລົງວັນທີ 28 ມັງກອນ ປີ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດວ້ຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ (ບໍລິສັດ) ຂໍຖືເປັນກຽດແຈ້ງມະຕິ ຂອງ ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2025 (ຕໍ່ໄປນີ້ຮຽກວ່າ : ກອງປະຊຸມ) ໄດ້ໄຂຂຶ້ນໃນ ເວລາ 09:00 ຫາ 11:45 ໂມງ ຂອງວັນທີ 23/12/2025 ທີ່ຫ້ອງປະຊຸມຊັ້ນ 4 ສຳນັກງານລັດວິສາຫະ ກິດ ພກອ,ນະຄອນຫຼວງວຽງຈັນ ໂດຍການເປັນປະທານຂອງ ທ່ານ ວັນທອງ ສິດທິກຸນ ຮອງປະທານ ສະພາບໍລິຫານ ບທວລ, ພ້ອມດ້ວຍສະມາຊິກສະພາບໍລິຫານ ບທວລ, ຊຶ່ງມີຜູ້ເຂົ້າຮ່ວມກອງປະຊຸມທັງ ໝົດ 24 ທ່ານ, ໃນນີ້ ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນທັງໝົດ 5 ທ່ານ, ຜູ້ມອບສິດຈຳນວນ 19 ທ່ານ, ຊຶ່ງກວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 28,059,000 ຮຸ້ນ, ນັບທັງຮຸ້ນທີ່ຖືກ ມອບສິດ, ບັນລຸອັດຕາສ່ວນ 70% ຂອງຈຳນວນຮຸ້ນ ບທວລ ທັງໝົດ ແລະຖືວ່າຄົບອົງປະຊຸມ ເພື່ອໃຫ້ ສາມາດດຳເນີນກອງປະຊຸມໄດ້ຕາມລະບຽບການຂອງ ບທວລ ແລະ ກົດໝາຍທີ່ກ່ຽວຂ້ອງ, ສຳລັບຮຸ້ນທີ່ບໍ່ ສາມາດເຂົ້າຮ່ວມກອງປະຊຸມມີຈຳນວນ 11,945,000 ຮຸ້ນເທົ່າກັບ 30% ຂອງຈຳນວນຮຸ້ນ ບທວລ.

<u>ກອງປະຊຸມໄດ້ພິຈາລະນາ ແລະມີມະຕິດັ່ງນີ້</u> :

• **ວາລະທີ 1**: ພິຈາລະນາ ແລະ ຮັບຮອງການສະເໜີສືບຕໍ່ຮັກສາສະຖານະການເປັນບໍລິສັດຈົດ ທະບຽນ.

ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມ ກອງປະຊຸມຄື :

- ເຫັນດີຈຳນວນ 28,059,000 ສຽງ ເທົ່າກັບ 100 %
- ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

• **ວາລະທີ 2** :ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ປີ 2026 - 2028.

ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

- ເຫັນດີຈຳນວນ 28,059,000 ສຽງ ເທົ່າກັບ 100 %
- ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

• **ວາລະທີ 3** : ພິຈາລະນາ ແລະ ຮັບຮອງ ການປ່ຽນຜູ້ອຳນວຍການໃຫຍ່ຂອງບໍລິສັດ.

ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

- ເຫັນດີຈຳນວນ 28,059,000 ສຽງ ເທົ່າກັບ 100 %
- ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

• **ວາລະທີ 4** : ພິຈາລະນາ ແລະ ຮັບຮອງ ການປ່ຽນສະມາຊິກສະພາບໍລິຫານຂອງບໍລິສັດ.

ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

- ເຫັນດີຈຳນວນ 28,059,000 ສຽງ ເທົ່າກັບ 100 %
- ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານ ເພື່ອຊາບ ໃຊ້ຕາງລາຍງານ
ດວ້ຍຄວາມເຄົາລົບ ແລະນັບຖືເປັນຢ່າງສູງ,

ປະທານກອງປະຊຸມ

ຈັນທອງ ສິດທິກຸນ